ສຳນັກງານໃຫຍ່

ເລກທີ 0362/ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ 04 FEB 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາບຳລຸງຮັກສາ (MA) ອຸປະກອນເຄື່ອງໄອທີ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນ ເຂົ້າຮ່ວມປະມູນລາຄາບຳລຸງຮັກສາ (MA) ອຸປະກອນເຄື່ອງໄອທີ ເພື່ອມານຳໃຊ້ເຂົ້າໃນວຽກງານຂອງທະນາຄານ ສະນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ/ດ | ລາຍການອຸປະກອນ | ຈຳນວນ | ວັນໝົດອາຍຸ | ໄລຍະເວລາຕໍ່ໃໝ່ |
|---|---|---|---|---|
| 1 | IBM Flash Storage FS91000 (SN: 78E01 GX) | 1 | 30/04/2025 | 01/05/2025-30/04/2026 |
| 2 | IBM Fash Storage FS7200 (SN: 78E380YX, 78E38YY) | 2 | 30/04/2025 | |
| 3 | Huawei OceanStor Dorado 5000V6 Controller Enclosure (SN: 2102352VUV10LA000013) | 1 | 21/03/2025 | 22/03/2025-30/04/2026 |
| 4 | Huawei OceanStor Dorado 5000V6 Disk Enclosure (SN: 2102352TVQFSM000039) | 1 | 21/03/2025 | |
| 5 | Huawei OceanStor Dorado 6000V6 Controller Enclosure (SN: 2102352VVA10LA000004) | 1 | 21/03/2025 | |
| 6 | Huawei OceanStor Dorado 6000V6 Disk Enclosure (SN: 2102352TVQFSM000038) | 1 | 21/03/2025 | |
| 7 | Huawei OceanStor NAS 5300V5 (SN: 2102352XEN9WL5800004, 2102352XEN9WL5800003) | 2 | 21/03/2025 | |

- **ເງື່ອນໄຂໃນການບຳລຸງຮັກສາ (MA) ຂອງອຸປະກອນ Huawei Storage ມີດັ່ງນີ້:**
  1. ຮັບຜິດຊອບໃນການປ່ຽນຖ່າຍອາໄຫລ່ຂອງອຸປະກອນ ດັ່ງກ່າວໃນກໍລະນີເກີດມີຄວາມເປ່ເພ ໃຫ້ທັນສະພາບການ.
  2. ຕ້ອງໃຫ້ ທຄຕລ ສາມາດເປີດ Case online ໄດ້ໂດຍກົງ.
  3. ບໍລິສັດຕ້ອງມີສ່ວນຮ່ວມໃນການ Update ແລະ upgrade Firmware ຂອງອຸປະກອນດັ່ງກ່າວ ຮ່ວມກັບ ທຄຕລ ຕາມຄວາມເໝາະສົມ.
  4. ໃນກໍລະນີມີບັນຫາເກີດຂຶ້ນ ບໍລິສັດຕ້ອງມີສ່ວນຮ່ວມໃນການກວດ ແລະ ວິເຄາະບັນຫາ ຮ່ວມກັບ ທຄຕລ.
  5. ມີການຕິດຕາມ ແລະ ໃຫ້ຄຳແນະນຳ ກັບ ທຄຕລ ເປັນປະຈຳ.
- **ເງື່ອນໄຂຂອງບໍລິສັດທີ່ຈະເຂົ້າຮ່ວມປະມູນ ຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

❖ **<u>ເອກະສານ ຊອງທີ 1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2022, 2023 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ.

2. ເອກະສານລາຍລະອຽດສະເປັກໜ້າວຽກ, ການຮັບປະກັນ, ໄລຍະເວລາການຈັດສົ່ງ License ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 14/02/2024 ເວລາ 11:00 ໂມງ** ໂດຍການສົ່ງຟາຍ PDF ເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la.

❖ **ເອກະສານ ຊອງທີ 2: (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຢ່າງໜ້ອຍ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 30/05/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.
3. ໃນວັນຄານ **ວັນທີ 25/02/2025 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.
- ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

**ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທໍານຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນ ປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
3. ການຊໍາລະແມ່ນຊໍາລະ 100% ຂອງມູນຄ່າ ພາຍໃນ 25 ວັນ ພາຍຫຼັງຕິດຕັ້ງສໍາເລັດ ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອໍານວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**



Head Office: No.1 Pangkham Street Vientiane, Lao PDR. P.O.Box 2925 Tel: (856-21) 213200-1, 222495, 217904, 217898-9
Fax: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhgv@bcel.com.la, SWIFT Code: COEBLALA

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………..../ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ....... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: